ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 16 ຫາ 20 ກັນຍາ 2024



ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕ້ອນຮັບການຢ້ຽມຢາມຂ່ຳນັບ
ຂອງທ່ານອຸປະທູດແຫ່ງປະເທດລຸກຊຳບວກ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕ້ອນຮັບການຢ້ຽມຢາມ ຂ່ຳນັບຂອງທ່ານອຸປະທູດແຫ່ງປະເທດລຸກຊຳບວກ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 18 ກັນຍາ 2024 ທີ່ຫ້ອງຮັບແຂກ ກະຊວງກະສິກຳ ແລະ ປ່າໄມ້ ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ໃຫ້ກຽດຕ້ອນຮັບ ການເຂົ້າຢ້ຽມຢາມຂ່ຳນັບ ຂອງ ທ່ານ ໂທຣມັສ ລາມມາຣ (Thomas Lammar) ອຸປະທູດ ແຫ່ງປະເທດລຸກຊຳບວກ ປະຈຳລາວ ພ້ອມດ້ວຍຄະນະ, ການພົບປະຄັ້ງນີ້ ແມ່ນເພື່ອປຶກສາຫາລື ກ່ຽວກັບການພັດທະນາການຮ່ວມມືສອງຝ່າຍ ລະຫວ່າງ ສປປ ລາວ ແລະ ປະເທດລຸກຊຳບວກ ໃນຂະແໜງກະສິກຳ ແລະ ປ່າໄມ້ ແລະ ວຽກງານອື່ນໆທີ່ຕິດພັນກັບຂະແໜງການ.

ການພົບປະຄັ້ງນີ້ ແມ່ນສືບເນື່ອງມາຈາກການຮ່ວມມືສອງຝ່າຍ ແລະ ການໃຫ້ການສະໜັບສະໜູນຊ່ວຍເຫຼືອຂອງລັດຖະບານປະເທດລຸກຊຳບວກທີ່ໄດ້ປະກອບສ່ວນໃນ 4 ແຜນງານຫຼັກ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃນໄລຍະຜ່ານມາ ແລະ ເພື່ອຮັດແໜ້ນສາຍພົວພັນຮ່ວມມືກັນໃນຕໍ່ໜ້າ ໃນໂອກາດນີ້ ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ຍົກໃຫ້ເຫັນບັນດາໂຄງການ ແລະ ກິດຈະກຳທີ່ຮ່ວມມືກັນລະຫວ່າງລັດຖະບານລຸກຊຳບວກ ແລະ ຂະແໜງກະສິກຳ ແລະ ປ່າໄມ້ ເຊິ່ງເຫັນວ່າມີຢູ່ໃນທຸກແຜນງານ ບໍ່ວ່າຈະເປັນດ້ານວຽກງານການຄ້ຳປະກັນສະບຽງອາຫານ, ວຽກງານຜະລິດກະສິກຳເປັນສິນຄ້າ, ວຽກງານຄຸ້ມຄອງປ່າໄມ້

ແລະ ວຽກງານພັດທະນາຊົນນະບົດ, ຕໍ່ກັບການຈັດຕັ້ງປະຕິບັດໃນບັນດາແຜນງານດັ່ງກ່າວດ້ານການຄໍ້າປະກັນສະບຽງອາຫານເຖິງວ່າປະເທດລາວຈະຮັບປະກັນໄດ້ໂດຍພື້ນຖານ ແຕ່ໃນເຂດຊົນນະບົດພວກເຮົາຍັງຕ້ອງສຸມໃສ່ດ້ານໂພຊະນາການເພື່ອໃຫ້ຊາວຊົນນະບົດໄດ້ຮັບສານອາຫານຄົບໝວດໝູ່, ພ້ອມດຽວກັນນີ້ພວກເຮົາກໍ່ກຳລັງສຸມໃສ່ການຜະລິດກະສິກຳເປັນສິນຄ້າເພື່ອສົ່ງອອກ ແລະ ຫຼຸດຜ່ອນການນຳເຂົ້າ, ເຊິ່ງໃນປັດຈຸບັນນີ້ທາງກະຊວງແມ່ນໄດ້ມີແຜນໂຄງການກ່ຽວກັບສັດຕະວະແພດທີ່ໄດ້ການນຳສະເໜີການສະໜັບສະໜູນ ພິຈາລະນາຕໍ່ລັດຖະບານລຸກຊຳບວກເຊິ່ງມີຄວາມຫວັງວ່າຈະຮັບການພິຈາລະນາເພື່ອປະກອບສ່ວນໃສ່ວຽກງານການຜະລິດເປັນສິນຄ້າ, ພ້ອມທັງສະເໜີຂໍການຮ່ວມມື ຊ່ວຍເຫຼືອຈາກລັດຖະບານລຸກຊຳບວກ ດ້ານການສ້າງນະໂຍບາຍ ແລະ ນິຕິກຳຕ່າງໆທີ່ເປັນພື້ນຖານສຳຄັນຕໍ່ກັບຂະແໜງກະສິກຳ ແລະ ປ່າໄມ້ເນື່ອງຈາກເປັນປະເທດທີ່ມີປະສົບການ ແລະ ມີຄວາມຊຳນິຊຳນານມາກ່ອນ.








**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;